# ວັນສຸດທ້າຍຂອງໂລກ
## ມື້ທີ່ເຮົາເຂົ້າໄປແດນນິລັນ

ມີນັກທຸລະກິດຄົນລັດເຊຍຄົນໜຶ່ງ ລາວໄດ້ໄປອະເມລິກາເພື່ອຕິດຕໍ່ທຸລະກິດ ແລະຢາກເຫັນສິ່ງມະຫັດສະ-ຈັນແລະສະຖານທີ່ສວຍງາມຕ່າງໆໃນອາເມລິກາ. ມື້ໜຶ່ງນັກທຸລະກິດຄົນລັດເຊຍຄົນນີ້ໄດ້ໄປກິນອາຫານທ່ຽງກັບໝູ່ທຸລະກິດຄົນອະເມລິກາ ພວກເຂົາທັງສອງກໍເວົ້າສູ່ກັນຟັງກ່ຽວສະພາບບ້ານເມືອງຂອງໃຜລາວ. ນັກທຸລະກິດລັດເຊຍກໍເວົ້າອອກມາຫລາຍສິ່ງຫລາຍຢ່າງກ່ຽວກັບບັນຫາຄວາມຫຍຸ້ງຍາກຕ່າງໆໃນລັດເຊຍ. ຫລັງຈາກນັ້ນນັກທຸລະກິດອະເມລິກາກໍເວົ້າບັນຫາຕ່າງໆໃນອະເມລິກາ ລາວເວົ້າວ່າ ຢູ່ອະເມລິການີ້ມີອັດ-ຕາການຢ່າຮ້າງສູງ ອັດຕາການຂ້າໂຕຕາຍຂອງໜຸ່ມສາວກໍສູງ ພະນັກງານຂັ້ນສູງຂອງລັດຖະບານມັກມີປະພຶດໃນທາງຜິດສິນລະທຳ ແລະລະບົບການເງິນກໍບໍ່ໝັ້ນຄົງ. ຟັງແລ້ວນັກທຸລະກິດລັດເຊຍກໍຕົກໃຈແລະເວົ້າອອກມາວ່າ “ຂ້ອຍຄິດວ່າອະເມລິກາເປັນປະເທດທີ່ເຕັມໄປດ້ວຍສິ່ງດີໆ. ຕົກໃຈຫລາຍທີ່ໄດ້ຍິນແບບນີ້! ແລະເຈົ້າຄິດປັນຫານີ້ມີທາງອອກບໍ່?” ນັກທຸລະກິດອະເມລິກາກໍຕອບວ່າ “ມີ, ຂ້ອຍເຊື່ອວ່າ ກະສັດເທົ່ານັ້ນທີ່ຈະແກ້ບັນຫາເຫລົ່ານີ້ໄດ້” ນັກທຸລະກິດລັດເຊຍກໍຕົກໃຈອີກແລະເວົ້າອອກມາວ່າ “ຂ້ອຍບໍ່ເຄີຍຄິດເລີຍວ່າຄົນອະເມລິກາຕ້ອງການກະສັດ! ຖ້າມີ ກະສັດນັ້ນຄົງຈະຕ້ອງເປັນກະສັດທີ່ດີຫລາຍນໍ້” “ແນ່ນອນ ກະສັດນີ້ດີປະເສີດຫລາຍ” ນັກທຸລະກິດອະເມລິກາຕອບ “ແລະກະສັດອົງນີ້ຄືພະເຍຊູຜູ້ຊຶ່ງຈະສະເດັດມາໄວໆນີ້! ພວກເຮົາທຸກຄົນເຊື່ອວ່າພະອົງເປັນຜູ້ດຽວທີ່ສາມາດແກ້ປັນຫາຕ່າງໆທີ່ພວກເຮົາກຳລັງພະຈົນທຸກມື້ນີ້ໄດ້.”

ເຮົາເຄີຍຄິດບໍ່ວ່າຈັກມື້ໜຶ່ງໂລກນີ້ຈະສູນສິ້ນໄປ? ແລະມັນຈະສູນສິ້ນໄປແບບໃດ?

ບາງຄົນຄິດວ່າມະນຸດຈະເຮັດສົງຄາມນິວເຄລຍ ແລະຜົນທີ່ຕາມມາກໍຄືທຸກສິ່ງມີຊີວິດບົນໜ້າໂລກນີ້ຈະຕ້ອງດັບໝົດ. ບາງຄົນກໍຄິດປະຊາກອນໂລກນີ້ຈະມີຫລາຍເກີນໄປ ຫລາຍເກີນກວ່າຈະມີຫາອາຫານແລະວັດຖຸດິບມາຕອບສະໜອງປາກແລະທ້ອງແລະຄວາມຕ້ອງການຕ່າງໆຂອງມະນຸດ ແລ້ວກໍຈະເກີດມີການອົດຫິວກັນດານອາຫານ. ບາງຄົນກັງວົນວ່າຈັກມື້ໜຶ່ງຈະມີອຸກະບາດຫລືຫີນຂະໜາດໃຫຍ່ມາຊົນແລະທຳລາຍໂລກດົນມາແລ້ວພະຄຳພີໄດ້ທຳນວາຍເຖິງການສິ້ນສຸດຂອງໂລກ ແລະທ່ານຮູ້ບໍ່ວ່າພະຄຳພີທຳນາຍວ່າແນວ-ໃດ?

ພີ່ນ້ອງທີ່ຮັກ ຂ້າພະເຈົ້າມີຂ່າວດີມາບອກທ່ານ ມວນມະນຸດສະຍະຊາດໃນໂລກນີ້ຈະບໍ່ຖືກທຳລາຍຫລືຕາຍຍ້ອນສົງຄາມ ຫລືຂາດອາຫານ ຫລືມີອັນໃດອັນໜຶ່ງມາຊົນໂລກ. ພະຄຳພີໄດ້ກ່າວວ່າໂລກນີ້ຈະຈົບລົງເມື່ອພະເຍຊູສະເດັດກັບມາສູ່ໂລກ. 2000 ປີທີ່ແລ້ວ ພະອົງໄດ້ສະເດັດເຂົ້າມາໃນໂລກນີ້ ແລະໃນອີກບໍ່ດົນນີ້ພະອົງກໍຈະສະເດັດກັບມາອີກເທື່ອໜຶ່ງ ມາຮັບໄພ່ພົນຂອງພະອົງເຂົ້າໄປສູ່ສະຫວັນແດນແຫ່ງຊີວິດນິລັນ.

ເມື່ອຖາມຫລາຍຄົນວ່າແມ່ນຫຍັງຈະເກີດຂຶ້ນເມື່ອພະເຍຊູສະເດັດມາ ຄຳຕອບທີ່ເຂົາໃຫ້ມາແມ່ນໜ້າສົນໃຈຫລາຍ.

ພີ່ນ້ອງທີ່ຮັກ, ພະເຍຊູຜູ້ເປັນກະສັດກຳລັງຈະສະເດັດລົງມາ ພະອົງຈະມາລົບລ້າງປັນຫາຕ່າງໆ ແລະຄວາມຫວຸ້ນວາຍສັບສົນໃນໂລກນີ້ໃຫ້ໝົດໄປ. ຊ່າງເປັນເລື່ອງປິຕິຍິນດີແທ້ເມື່ອພະອົງສະເດັດກັບມາ. ໃນຂະນະອັກຄະສາວົກໂປໂລຖືກຈອງຈຳຢູ່ໃນຄຸກ ລໍຄອຍໃຫ້ເຂົານຳໂຕໄປປະຫານ ລາວໄດ້ຂຽນຂໍ້ຄວາມນີ້

(ຕິໂຕ 2:13) "ໃຫ້ຄອງຖ້າຄວາມສຸກທີ່ສົມກັບຄວາມຫວັງຂອງເຮົາ ຄື ການສ່ອງມາປາກົດອັນຮຸ່ງເຮືອງຂອງພຣະເຈົ້າອົງໃຫຍ່ ຄືພຣະເຢຊູຄຣິດ ຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ"

ໂປໂລໄດ້ຂຽນຂໍ້ຄວາມໜູນໃຈໄປຍັງຕິໂຕຜູ້ເປັນ "ບຸດແທ່ງຄວາມເຊື່ອຂອງລາວ" ເພື່ອທີ່ຈະຍ້ຳເຕືອນເຖິງ "ການສະເດັດມາຢ່າງສະງ່າລາສີຂອງພະເຈົ້າ" ຂອງເຮົາທັງຫລາຍ ຖ້າພີ່ນ້ອງພົບວ່າ ຫລືຄິດວ່າຊີວິດພີ່-ນ້ອງກຳລັງຕົກຢູ່ໃນມໍລະສຸມແຫ່ງຊີວິດ ເບິ່ງໄປທາງໃດກໍມືດໄປໝົດ ຂໍໃຫ້ພີ່ນ້ອງຈົ່ງຈຳໄວ້ແລະມອງໄປທີ່ "ຄວາມຫວັງແຫ່ງພະພອນ" ນັ້ນຄືການສະເດັດກັບມາຄັ້ງທີສອງຂອງພະເຍຊູ ເພື່ອທີ່ຈະມາເຮັດໃຫ້ທຸກສິ່ງທຸກຢ່າງຢູ່ໃນສະພາບຖືກຕ້ອງດີງາມ

ເຫດການທີ່ພະຄຳພີໃໝ່ໄດ້ກ່າວເຖິງຫລາຍທີ່ສຸດນັ້ນຄືການສະເດັດກັບມາຄັ້ງທີສອງຂອງພະຄຣິດ ທຸກ 1 ໃນ 25 ຂໍ້ ຂອງພະຄຳພີໃໝ່ໄດ້ເວົ້າເຖິງສິ່ງໃດໜຶ່ງກ່ຽວກັບການສະເດັດກັບມາຂອງພະອົງນີ້. ພະຄຣິດໄດ້ກ່າວເຖິງເຫດການນີ້ຫລາຍກວ່າສິ່ງອື່ນໆທີ່ບັນທຶກໄວ້ໃນພະຄຳພີໃໝ່

(ໂຢຮັນ 3:16) ມີພະຄຳພີສອງຂໍ້ທີ່ທຸກຄົນທີ່ເຊື່ອໃນພະຄຳພີໃໝ່ຄວນຮູ້. ຂໍ້ທີ່ເປັນທີ່ຮູ້ຈັກກັນດີນັ້ນຄື ໂຢຮັນ 3:16 "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"

ຂໍ້ທີສອງເປັນພະສັນຍາທີ່ເຮົາສາມາດເຊື່ອຖືໄດ້ເຊິ່ງພະເຍຊູໄດ້ໃຫ້ໄວ້ກ່ອນທີ່ພະອົງຈະຖືກຕຶງທີ່ໄມ້ກາງແຂນແລະຈະສະເດັດຂຶ້ນສູ່ສວງສະຫວັນ: (ໂຢຮັນ 14,1-3) "ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປຈົ່ງວາງໃຈໃນພຣະເຈົ້າແລະໄວ້ວາງໃຈໃນເຮົາເຫມືອນກັນ ໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນຖ້າບໍ່ມີເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍ ເມື່ອເຮົາໄປ

ຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເຫມືອນກັນ”

ຫລາຍສັດຕະວັດທີ່ຜ່ານມາ ເມື່ອໃດກໍຕາມທີ່ຄວາມຜິດຫວັງ ຄວາມທຸກຍາກລຳບາກຫລືແມ້ກະທັ້ງຄວາມຕາຍ ເຂົ້າມາບັງບຽດເຫລົ່າຜູ້ຕິດຕາມພະຄຣິດ ດ້ວຍຄວາມເຊື່ອແລະຄວາມຫວັງໃນການສະເດັດກັບມາຄັ້ງທີສອງຂອງພະອົງເລີຍເຮັດໃຫ້ເຂົາມີກຳລັງໃຈ ມີແຮງຕໍ່ສູ້ແລະຜ່ານຜ່າສິ່ງຕ່າງໆເຫລົ່ານີ້ໄປ.
ຜູ້ທີ່ຕິດຕາມພະເຍຊູມີຄວາມເຊື່ອຢ່າງແຮງກ້າວ່າພະເຍຊູຈະສະເດັດກັບມາຕາມທີ່ພະອົງໄດ້ສັນຍາ

(2 ຕີໂມທຽວ 4:7-8) ຕໍ່ມາ ກ່ອນທີ່ເຂົາຈະນຳໂປໂລໄປປະຫານ ໂປໂລໄດ້ເວົ້າອອກມາດ້ວຍຄວາມພາກ-ພູມໃຈວ່າ “ເຮົາໄດ້ອົດສາສູ້ໃນການແຂ່ງຂັນ ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວ ແຕ່ນີ້ຕໍ່ໄປພວງມາລັຍຄືຮາງວັນແຫ່ງຄວາມຊອບທັມ ຊົງຈັດໄວ້ຖ້າເຮົາແລ້ວ ຊຶ່ງອົງພຣະຜູ້ເປັນເຈົ້າຜູ້ພິພາກສາອັນຍຸດຕິທັມ ຈະຊົງປະທານແກ່ເຮົາໃນວັນນັ້ນ ແລະບໍ່ແມ່ນແກ່ເຮົາຜູ້ດຽວ ແຕ່ຈະຊົງປະ-ທານແກ່ຄົນທັງປວງທີ່ມີໃຈຍິນດີໃນການຊົງສ່ອງສວ່າງມາປາກົດຂອງພຣະອົງ”

ໂປໂລບໍ່ຢ້ານຄົມດາບຂອງເພັດຊະຄາດເພາະລາວມີຄວາມເຊື່ອໃນພະສັນຍາຂອງການສະເດັດກັບມາຂອງພະຄຣິດ! ແມ່ນແລ້ວ, ພະເຍຊູຈະສະເດັດກັບມາ! ພີ່ນ້ອງທີ່ຮັກ ຄຳສັນຍາຂອງພະຄຣິດທີ່ມີຕໍ່ສາວົກຂອງພະອົງນັ້ນແມ່ນຄຳສັນຍາທີ່ພະອົງມີຕໍ່ເຮົາທຸກຄົນຄືກັນ. ພະເຍຊູຈະສະເດັດມາ! ເມື່ອພວກສາວົກຖາມພະເຍຊູໃຫ້ບອກພວກເຂົາເຖິງໝາຍສຳຄັນຂອງການສະເດັດມາຂອງພະອົງ ແລະການໝົດໄປຂອງໂລກ ພະອົງໄດ້ບອກລາຍລະອຽດກ່ຽວກັບເຫດການຕ່າງໆທີ່ຈະເກີດຂຶ້ນກ່ອນພະອົງຈະສະເດັດມາ

(ມັດທາຍ 24:4,5) ໃຫ້ເຮົາມາອ່ານນຳກັນ: ພຣະເຢຊູຊົງຕອບເຂົາວ່າ, “ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ ດ້ວຍວ່າຈະມີຫລາຍຄົນມາອ້າງນາມຂອງເຮົາວ່າ ‘ເຮົານີ້ແຫລະ, ເປັນພຣະຄຣິດ’ ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ”

ໃນ ມັດທາຍ 4:24 ພະອົງໄດ້ກ່າວເພີ່ມເຕີມວ່າ “ດ້ວຍວ່າຈະມີພຣະຄຣິດທຽມ ແລະຫມໍທຳນວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງຫມາຍສຳຄັນອັນໃຫຍ່ແລະການອັດສະຈັນຕ່າງໆ ເພື່ອຖ້າເປັນໄດ້ ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ”

ຖ້າພວກເຮົາບໍ່ສາມາດຈຳແນກຫລືບອກຄວາມແຕກຕ່າງໄດ້ເຖິງພະຄຣິດທຽມເທັດແລະຄິດວ່າຜູ້ນັ້ນເປັນພະຄຣິດແທ້ ເຮົາກໍຈະຕົກເປັນເຫຍື່ອຂອງພະຄຣິດປອມນັ້ນ. ພະເຍຊູໄດ້ເຕືອນແລ້ວວ່າ ສິ່ງນີ້ຈະເກີດຂຶ້ນ!

ໃນທີ່ນີ້ພະອົງບໍ່ໄດ້ເວົ້າເຖິງນັກຫລອກລວງທຳມະດາ ແຕ່ພະອົງໄດ້ກ່າວວ່າພະຄຣິດທຽມເທັດແມ່ນເປັນນັກຕົ້ມຕຸນທີ່ຕີບົດລະຄອນແຕກຫລາຍ ທີ່ໄດ້ວາງແຜນມາເປັນຢ່າງດີແລະປະຕິບັດດ້ວຍຄວາມຮອບຄອບແລະສາມາດລວງຄົນທັງໂລກໃຫ້ຫລົງໄປ! ພະຄຣິດທຽມເທັດເຫລົ່ານີ້ສາມາດເຮັດການອັດສະຈັນ ຮັກສາຄົນປ່ວຍ ແລະມີຄຳເວົ້າຄຳຈາທີ່ຈັບໃຈ ຈະມີຫລາຍຄົນຖືກຕົວະຖືກຫລອກລວງໃຫ້ຫລົງ ມານຮ້າຍຈະໃຊ້ພະຄຣິດທຽມເທັດແລະຄຳພະຍາກຫລອກລວງມາເຮັດໃຫ້ຜູ້ຄົນສັບສົນເຖິງການກັບມາຄັ້ງທີສອງຂອງເຍຊູ

(2 ໂກຣິນໂທ 11:13,14) "ເພາະວ່າຄົນຢ່າງນັ້ນເປັນອັຄສາວົກທຽມ ເປັນຄົນງານທີ່ຫລອກລວງ ທີ່ປອມຕົວເປັນອັຄສາວົກຂອງພຣະຄຣິດ ການເຮັດຢ່າງນັ້ນບໍເປັນການປລາດຫຍັງດອກ ເພາະຊາຕານເອງກໍຍັງປອມຕົວເປັນເທວະດາຂອງຄວາມສວ່າງໄດ້"

ມານຮ້າຍສາມາດປອມໂຕ ແລະເຮັດໃຫ້ມີເຫດການຄ້າຍຄືການກັບມາຂອງພະຄຣິດ

(Video: 13 sec) ບາງຄັ້ງບາງຄາວເຮົາກໍອາດໄດ້ຍິນມີຄົນມາອ້າງເຂົາເປັນພະຄຣິດ. ເຂົາອາດຈະໃສ່ເຄື່ອງນຸ່ງທີ່ຄົນຄິດວ່າເມື່ອພະຄຣິດສະເດັດກັບມາພະອົງຈະໃສ່ແບບນີ້ ພວກເຂົາອາດຈະເວົ້າສຽງມ່ວນອ້າງອີງຂໍ້ພະຄຳພີເກ່ງ ເບິ່ງແລ້ວເຂົາຄືເປັນຄົນສະຫລາດ ພວກເຂົາບາງຄົນອາເວົ້າດຶງດູດຈິດໃຈເຮັດໃຫ້ຄົນເປັນຈຳນວນມາກຕິດຕາມແລະຫລົງເຊື່ອວ່າ ພະຄຣິດໄດ້ມາໃນໂລກນີ້ແລ້ວ

ແຕ່ວ່າພວກເຂົາບໍ່ແມ່ນພະຄຣິດ ພວກເຮົາມາດຮູ້ໄດ້ເລີຍວ່າພວກເຂົາບໍ່ແມ່ນພະຄຣິດ ເຖິງແມ້ວ່າຄົນນັ້ນອາດມີຮູບຮ່າງລັກສະນະຕາມທີ່ເຮົາຄິດວ່າເປັນພະຄຣິດ ລາວອາດຈະກ່າວແບບດຽວກັນກັບສິ່ງທີ່ເຮົາຄິດວ່າພະຄຣິດຈະກ່າວ ລາວອາດຈະຮັກສາຄົນແລະເຮັດການອັດສະຈັນຫລາຍຢ່າງ ຈົນສາມາດເຮັດໃຫ້ຄົນຕາຍໃຈໄດ້ວ່າຜູ້ນີ້ແມ່ນພະຄຣິດ ແຕ່ວ່າພວກເຮົາກໍຍັງບໍ່ສາມາດເຊື່ອໃນສິ່ງທີ່ເຮົາເຫັນ, ໄດ້ຍິນ ແລະຮູ້ສຶກໄດ້ເທື່ອ. ມີສິ່ງໜຶ່ງທີ່ສາມາດບອກໄດ້ເລີຍວ່າຜູ້ທີ່ມານັ້ນແມ່ນພະຄຣິດແທ້ຫລືພະຄຣິດທຽມເທັດ ສິ່ງນັ້ນຄືພະຄຳພີ. ໃຫ້ເຮົາມາເບິ່ງສອງສາມເຫດການທີ່ຈະເກີດຂຶ້ນແລະບໍ່ມີໃຜເຮັດໄດ້ເມື່ອພະຄຣິດສະເດັດກັບມານັ້ນຄື ຕາທຸກໜ່ວຍຈະເຫັນພະອົງເມື່ອພະອົງສະເດັດມາ

(ມັດທາຍ 24:27) "ດ້ວຍວ່າຟ້າແມບເຫລື້ອມອອກມາແຕ່ທິດຕາເວັນອອກ ສ່ອງໄປເຖິງທິດຕາເວັນຕົກຢ່າງໃດ ການທີ່ບຸດມະນຸດຈະສະເດັດມາກໍຈະເປັນຢ່າງນັ້ນ"

ພະຄຳພະນິມິດ 1:7 ໄດ້ກ່າວວ່າ "ເບິ່ງແມ່, ພຣະອົງຈະສະເດັດມາມີເມກເປັນຂະບວນແຫ່ ຕາທຸກຫນ່ວຍຈະເຫັນພຣະອົງ"

ພວກເຮົາທຸກຄົນຍັງບໍ່ມີໃຜເຫັນຄົນທີ່ອ້າງໂຕວ່າເປັນພະຄຣິດເທື່ອ ເຖິງວ່າໃນພາຍໜ້າຈະມີຄົນມາອ້າງແນວໃດກໍຕາມວ່າເຂົາເປັນພະຄຣິດ ໃຫ້ເຮົາຮູ້ເລີຍວ່າເຂົາບໍ່ແມ່ນພະຄຣິດ ຄວາມຈິງແລ້ວ ພະເຍຊູໄດ້ບອກສາວົກຂອງພະອົງກ່ຽວກັບການສະເດັດມາຂອງພະອົງ ຄັ້ງໜຶ່ງພະອົງສະເດັດມາໃນໂລກ ມາເຮັດພາ-ລະກິດຂອງພະອົງ ພະອົງໄດ້ເຂົ້າມາໄຖ່ຄ່າຄວາມຜິດບາບຂອງມະນຸດ. ຫລັງຈາກທີ່ພະອົງໄດ້ສັ່ງບອກສິ່ງຕ່າງໆແກ່ສາວົກຂອງພະອົງແລ້ວ ພະອົງໄດ້ນຳພາຜູ້ຕິດຕາມພະອົງຢ່າງໃກ້ຊິດຂຶ້ນໄປພູໝາກກອກເທດ ແລະໃນທັນໃດນັ້ນ ພະອົງກໍຖືກຮັບຂຶ້ນໄປສະຫວັນ. ໃຫ້ເຮົາມາເບິ່ງວ່າພະຄຳພີໄດ້ເວົ້າກ່ຽວກັບເຫດການນີ້ວ່າແນວໃດ.

(ກິດຈະການ 1:9-11) "ເມື່ອພຣະອົງຊົງກ່າວດັ່ງນັ້ນແລ້ວ ພຣະເຈົ້າຊົງຮັບພຣະອົງຂຶ້ນເມືອ ຂນະທີ່ເຂົາກຳລັງເບິ່ງຢູ່ ແລະມີເມກມາຮັບພຣະອົງໃຫ້ພົ້ນຈາກສາຍຕາຂອງເຂົາ ເມື່ອເຂົາກຳລັງແນມເບິ່ງຟ້າ ຂນະທີ່ພຣະອົງສະເດັດຂຶ້ນເມືອນັ້ນ ເບິ່ງແມ່, ມີສອງຄົນນຸ່ງເຄື່ອງຂາວມາປາກົດຢືນຢູ່ໃກ້ເຂົາ ສອງຄົນນັ້ນຈຶ່ງກ່າວວ່າ, 'ຊາວຄາລີເລເອີຍ, ເປັນຫຍັງພວກທ່ານຈຶ່ງຢືນເບິ່ງທ້ອງຟ້າ ພຣະເຢຊູອົງນີ້ຊຶ່ງຊົງຮັບໄປຈາກພວກທ່ານຂຶ້ນເມືອສວັນແລ້ວ ຈະສະເດັດມາອີກເຫມືອນຢ່າງທີ່ພວກທ່ານໄດ້ເຫັນພຣະອົງຂຶ້ນເມືອຍັງສວັນນັ້ນ'"

ທູດສະຫວັນສອງອົງຂອງພະເຈົ້າໄດ້ມາປາກົດແກ່ພວກສາວົກແລະບອກໃຫ້ພວກເຂົາແນ່ໃຈວ່າ ພະເຍຊູຈະສະເດັດມາຕາມທີ່ພະອົງໄດ້ສັນຍາ

(ລູກາ 21:27) ພະເຍຊູໄດ້ບອກພວກເຂົາຢ່າງແຈ່ມແຈ້ງເຖິງສິ່ງທີ່ພວກເຂົາຈະເຫັນ: "ເມື່ອນັ້ນເຂົາຈະເຫັນບຸດມະນຸດສະເດັດມາໃນເມກ ດ້ວຍຣິດທານຸພາບແລະສະງ່າຣາສີອັນຍິ່ງໃຫຍ່"

ບໍ່ຈຳເປັນຈະຕ້ອງມີໃຜມາບອກພີ່ນ້ອງວ່າ ພະເຍຊູສະເດັດມາແລ້ວ ພະເຍຊູສະເດັດມາແລ້ວ ພີ່ນ້ອງຈະເຫັນພະອົງສະເດັດລົງມາໃນເມກດ້ວຍໂຕພີ່ນ້ອງເອງ. ຍັງມີຫລາຍເຫດການອື່ນໆອີກທີ່ມານບໍ່ສາມາດເຮັດໄດ້ ພະຄຣິດຈະບໍ່ມາປາກົດໃນສະຖານທີ່ກັນດານບ່ອນນີ້ແບບກະທັນຫັນ ແລ້ວກໍຫາຍໂຕໄປ ແລ້ວກໍໄປປາກົດຢູ່ອີກບ່ອນໜຶ່ງແບບກະທັນຫັນ ພະອົງຈະບໍ່ຂີ່ຍານອາວະກາດມາປາກົດ ພະເຍຊູຈະບໍ່ສະເດັດມາປາກົດພຽງພະອົງອົງດຽວ ພະອົງຈະມາພ້ອມສະງ່າລາສີ!

(ມັດທາຍ 25:31) ພະເຍຊູໄດ້ກ່າວວ່າ “ເມື່ອບຸດມະນຸດຊົງພຣະຣັສມີສະເດັດມາພ້ອມດ້ວຍຝູງເທວະດາ ເມື່ອນັ້ນພຣະອົງຈະຊົງປະທັບເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງພຣະອົງ.”

(ມັດທາຍ 24:31) ເປັນຫຍັງພະເຍຊູຈິ່ງເອົາທູດສະຫວັນລົງມານຳເມື່ອພະອົງສະເດັດມາ?
ພະອົງໄດ້ກ່າວວ່າ “ພຣະອົງຈະໃຊ້ພວກເທວະດາຂອງພະອົງໄປດ້ວຍສຽງແກອັນດັງ ໃຫ້ຮວບຮວມເອົາຄົນທັງປວງທີ່ພຣະອົງຊົງເລືອກໄວ້ແລ້ວຈາກທິດທັງສີ່ ຕັ້ງແຕ່ທີ່ສຸດຟ້າເບື້ອງນີ້ຈົນເຖິງທີ່ສຸດຟ້າເບື້ອງນັ້ນ” ມັດທາຍ 24:31

ແມ່ນແລ້ວພະເຍຊູຈະມາພ້ອມກັບທູດສະຫວັນເປັນຈຳນວນຫລາຍເຮັດໃຫ້ທ້ອງຟ້າເຕັມໄປດ້ວຍສະງ່າລາສີ
ພີ່ນ້ອງແນ່ໃຈໄດ້ເລີຍວ່າຄົນທີ່ເຂົາມາອ້າງວ່າເປັນພະຄຣິດນັ້ນ ພວກເຂົາບໍ່ແມ່ນພະຄຣິດ ບໍ່ມີໃຜສາມາດເຮັດໃຫ້ມີເຫດການເໝືອນດັ່ງພະເຍຊູສະເດັດມາ ບໍ່ມີໃຜສາມາດເຮັດໄດ້
ແຕ່ວ່າຍັງຈະມີຫລາຍເຫດການທີ່ກ່ຽວເນື່ອງກັບການສະເດັດກັບມາຂອງພະເຍຊູ
ທຸກຄົນຈະໄດ້ຍິນສຽງຂອງການສະເດັດມາຂອງພະອົງ

(1 ເທຊະໂລນິກ 4:16) “ດ້ວຍວ່າຈະມີຄຳສັ່ງອັນດັງ ຈະມີສຽງຂອງອັຄເທວະດາ ແລະສຽງແກຂອງພຣະເຈົ້າ ແລ້ວອົງພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ”

ບໍ່ພຽງແຕ່ຕາທຸກດວງຈະເຫັນເທົ່ານັ້ນ ແຕ່ຫູທຸກໃບກໍຍັງຈະໄດ້ຍິນນຳເມື່ອພະອົງສະເດັດມາ
ສຽງຮ້ອງຂອງພະເຈົ້າແລະສຽງແກ່ອັນດັງຈະອອກມາຈາກທ້ອງຟ້າ ຄົນທີ່ຕາຍໃນພະຄຣິດຈາກເປັນຄືນມາຈາກຫລຸມຝັງສົບກ່ອນໝູ່. ໃຫ້ພີ່ນ້ອງລອງຄິດເຖິງເຫດການທີ່ຫລຸມຝັງສົບໄດ້ເປີດອອກ ແລະທຸກຄົນໃນຄອບຄົວກໍຈະໄດ້ມາລວມກັນອີກເທື່ອໜຶ່ງ. ຊາຕານບໍ່ສາມາດຮຽນແບບຫລືຈຳລອງເຫດການຂອງການກັບມາຂອງພະຄຣິດໄດ້. ຄົນທີ່ໃຊ້ຊີວິດຢ່າງຊອບທຳຈະຖືກຮັບໄປພົບພະເຍຊູ
ຍັງມີຂ່າວດີອື່ນໆອີກ! ໃຫ້ເຮົາມາເບິ່ງນຳກັນວ່າຄົນຊອບທຳທີ່ກຳລັງມີຊີວິດຢູ່ຕອນພະຄຣິດສະເດັດມາເຂົາຈະເປັນແບບໃດ

(1 ເທສະໂລນິກ 4:17) “ຫລັງຈາກນັ້ນເຮົາທັງຫລາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ”

(Video: 5 sec) ສາວົກຜູ້ສັດຊື່ຕໍ່ພະເຍຊູຈະຖືກຮັບຂຶ້ນໄປພ້ອມກັນກັບຜູ້ທີ່ເປັນຂຶ້ນມາເພື່ອໄປພົບພະເຈົ້າໃນຟ້າສະຫວັນ. ມັນຊ່າງເປັນເຫດການທີ່ມີຄວາມສຸກເຫລືອຫລາຍ ຄົນໃນຄອບຄົວຈະໄດ້ມາຢູ່ຮວມກັນອີກເທື່ອໜຶ່ງ. ແລະທຸກໆຄົນທີ່ລອດຈະໄດ້ຮັບການປ່ຽນໃໝ່

(1 ໂກຣິນໂທ 15:51-53) ໂປໂລໄດ້ບອກລາຍລະອຽດວ່າແມ່ນຫຍັງຈະເກີດຂຶ້ນເມື່ອພະເຍຊູສະເດັດກັບມາ "ນີ້ແຫລະ, ເຮົາມີຂໍ້ລັບເລິກບອກພວກເຈົ້າວ່າ ເຮົາທັງຫລາຍຈະບໍ່ລ່ວງຫລັບໄປຫມົດທຸກຄົນ ແຕ່ເຮົາທັງຫລາຍຈະຖືກຊົງປ່ຽນແປງໃຫມ່ຫມົດທຸກຄົນ ໃນຊົ່ວຂະນະດຽວ ໃນພັບຕາດຽວ ເມື່ອເປົ່າແກຄັ້ງສຸດທ້າຍນັ້ນ ດ້ວຍວ່າຈະມີສຽງແກ ແລະຄົນທີ່ຕາຍແລ້ວຈະຖືກຊົງບັນດານໃຫ້ເປັນຄືນຂຶ້ນມາໂດຍບໍ່ເປື່ອຍເນົ່າ ແລະຝ່າຍພວກເຮົາກໍຈະຖືກຊົງປ່ຽນແປງໃຫມ່ ເພາະວ່າກາຍທີ່ເປື່ອຍເນົ່ານີ້ຕ້ອງສວມກາຍທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລະກາຍທີ່ຕາຍເປັນນີ້ຕ້ອງສວມກາຍທີ່ຕາຍບໍ່ເປັນ"

ພະເຈົ້າໄດ້ມອບຂອງປະທານແກ່ຜູ້ຕິດຕາມພະເຍຊູທຸກຄົນ ນັ້ນຄືຄວາມຮັກແລະຊີວິດອັນຕະຫລອດໄປເປັນນິດ. ຂອງທຸກສິ່ງທຸກຢ່າງໃນໂລກນີ້ລ້ວນແລ້ວແຕ່ໄຮ້ຄວາມໝາຍຖ້າບໍ່ມີຂອງປະທານແຫ່ງຊີວິດນິລັນນີ້.

(ຟີລິບປອຍ 3:20,21) ແລະກໍຍັງມີສິ່ງອື່ນອີກທີ່ພະເຈົ້າຈະມອບໃຫ້ຄົນຂອງພະອົງ "... ພວກເຮົາລໍຄອຍພຣະຜູ້ໂຜດໃຫ້ພົ້ນ ຊຶ່ງຈະສະເດັດມາຈາກສວັນ ຄືພຣະເຢຊູຄຣິດເຈົ້າ ພຣະອົງຈະຊົງປ່ຽນແປງຮ່າງກາຍອັນຕ່ຳຕ້ອຍຂອງພວກເຮົາ ໃຫ້ເປັນເຫມືອນພຣະກາຍອັນຊົງສະງ່າຣາສີຂອງພຣະອົງ"

ພວກເຮົາທຸກຄົນຈະມີຮ່າງກາຍເໝືອນກັບຮ່າງກາຍຂອງພະຄຣິດ ບໍ່ມີໃຜເຈັບປວດ ບໍ່ມີໂລກຮ້າຍຕ່າງໆຈະມີຂ່າວອື່ນອີກອັນໃດທີ່ໜ້າຍິນດີໄປກວ່ານີ້?

ຈະມີແຜ່ນດິນໄຫວທີ່ຫຍິ່ງໃຫຍ່

(ພະນິມິດ 6:14-17) "ທ້ອງຟ້າກໍຫົດເຂົ້າເສັ້ງເຫມືອນດັ່ງຫນັງສືທີ່ເຂົາມ້ວນ ພູທຸກຫນ່ວຍແລະເກາະທຸກເກາະກໍເຄື່ອນໄປຈາກບ່ອນເດີມ ແລ້ວກະສັດທັງຫລາຍໃນແຜ່ນດິນໂລກ ພວກເຈົ້ານາຍ ພວກນາຍພັນນາຍພົນ ພວກເສດຖີ ພວກຜູ້ມີອຳນາດ ແລະທຸກຄົນທັງທີ່ເປັນຂ້ອຍຂ້າແລະມີເສຣີກໍພາກັນໄປລີ້ຊ່ອນຢູ່ໃນຖ້ຳແລະໃນຫວ່າງຫີນຕາມພູເຂົາຮ້ອງບອກພູແລະໂງ່ນຫີນວ່າ, 'ຂໍໃຫ້ເນີ້ງມາບັງພວກເຮົາໄວ້ ໃຫ້ພົ້ນຈາກພຣະພັກຂອງພຣະອົງ ຜູ້ຊົງປະທັບເທິງພຣະຣາຊບັນລັງແລະຈາກພຣະພິໂຣດຂອງພຣະເມສານ້ອຍນັ້ນເພາະວ່າວັນສຳຄັນແຫ່ງພຣະພິໂຣດຂອງພຣະອົງໄດ້ມາເຖິງແລ້ວ ແລະຜູ້ໃດຫນໍ ຈະອາດທົນຢູ່ໄດ້ '"

(ພະນິມິດ 16:18) "ແລະເກີດມີຟ້າແມບ ມີສຽງດັງຕ່າງໆ ມີຟ້າຮ້ອງ ແລະເກີດແຜ່ນດິນໄຫວອັນໃຫຍ່ ຊຶ່ງຕັ້ງແຕ່ມີມະນຸດເກີດມາໃນໂລກ ບໍ່ເຄີຍມີແຜ່ນດິນໄຫວອັນໃຫຍ່ແລະຮ້າຍປານນີ້ຈັກເທື່ອ"

ແຜ່ນດິນໄຫວອັນນີ້ຈະເຮັດໃຫ້ເມືອງຕ່າງໆມ້າງເພທັກພັງລົງ ເມື່ອພະຄຣິດສະເດັດກັບມາ! ພະເຍຊູໄດ້ກ່າວເຕືອນວ່າພະອົງຈະມາໃນໂມງເວລາທີ່ບໍ່ມີໃຜຄາດຫວັງ

(ມັດທາຍ 24:30) ໃນ ມັດທາຍ 24:30 ໄດ້ກ່າວວ່າ "... ມະນຸດທຸກຊາດທົ່ວໂລກຈະຕີເອິກຮ້ອງໄຫ້..." ນີ້ແມ່ນສິ່ງທີ່ພະເຍຊູກ່າວວ່າຈະເກີດຂຶ້ນກັບຄົນທີ່ບໍ່ພ້ອມສຳລັບວັນພະອົງສະເດັດມາ! ຄົນເຫລົ່ານັ້ນເປັນເໝືອນຄົນທີ່ຫລົງຫາຍແລະພວກເຂົາກໍຮູ້ໂຕເຂົາດີ ຊ່າງເປັນເຫດການທີ່ໜ້າເສົ້າຫລາຍ

ພີ່ນ້ອງທີ່ຮັກມື້ນັ້ນຈະມາເຖິງແທ້! ໃນໂລກນີ້ບໍ່ມີຫຍັງສຳຄັນໄປກວ່າການຕຽມໂຕພ້ອມໃນການສະເດັດກັບມາຂອງພະເຍຊູ ຊັບສົມບັດທຸກຢ່າງໃນໂລກທີ່ພວກເຮົາຄິດວ່າເປັນຂອງມີຄ່າລ້ວນແຕ່ເປັນຂອງບອບບາງບໍ່ທົນທານ! ແຜ່ນດິນໄຫວພຽງເທື່ອດຽວເທົ່ານັ້ນ ທຸກສິ່ງທຸກຢ່າງກໍພັງທະລາຍໄປ!
ຢາກຖາມພີ່ນ້ອງແນ່ວ່າ ຕອນທີ່ພະເຍຊູສະເດັດມານັ້ນ ພີ່ນ້ອງຈະຢູ່ໃສແລະຈະກຳລັງເຮັດຫຍັງຢູ່?

ພະເຍຊູໄດ້ກ່າວເຕືອນວ່າພະອົງຈະມາໃນໂມງເວລາທີ່ບໍ່ມີໃຜຄາດຫວັງ
ພະອົງຍັງຊົງກ່າວອີກວ່າຄົນທັງຫລາຍຈະມົວຫຍຸ້ງເສຍເວລາຢູ່ກັບສິ່ງບໍ່ດີເຊັ່ນຕັນຫາລາຄາທັງຫລາຍ

(ລູກາ 21:36) "ເຫດສັນນັ້ນຈົ່ງເຝົ້າລະວັງແລະໄຫວ້ວອນຢູ່ທຸກເວລາ ເພື່ອທ່ານຈະມີກຳລັງພົ້ນຈາກເຫດ-ການທີ່ຈະບັງເກີດມານັ້ນ ແລະຈະຢືນຢູ່ຕໍ່ຫນ້າບຸດມະນຸດໄດ້"

ໃຫ້ເຮົາທວນຄືນນຳກັນວ່າພວກເຮົາໄດ້ຮຽນຮູ້ຫຍັງແນ່ ຜູ້ພະຍາກອນແລະພະຄຣິດທຽມເທັດຈະລວງຄົນໃຫ້ຫລົງໄປ ມານຮ້າຍຈະພະຍາຍາມຮຽນແບບທູດສະຫວັນຜູ້ສະງ່າລາສີ ການສະເດັດມາຄັ້ງທີສອງຈະບໍ່ແມ່ນສິ່ງທີ່ເປັນຄວາມລັບ ຕາທຸກດວງຈະເຫັນພະຄຣິດເມື່ອພະອົງສະເດັດມາ ແລະທູດສະຫວັນຜູ້ບໍລິສຸດຈະສະ-ເດັດມາພ້ອມກັບພະຄຣິດ ພະອົງຈະມາພ້ອມກັບສຽງແກອັນກຶກກ້ອງພ້ອມດ້ວຍສຽງຮ້ອງຂອງຫົວໜ້າທູດສະຫວັນ ຄົນຊອບທຳທີ່ຕາຍໄປຈະຖືກຮ້ອງໃຫ້ເປັນຂຶ້ນມາ ຄົນຊອບທຳທີ່ຍັງເປັນຢູ່ຈະໄດ້ຮັບການປ່ຽນໃໝ່ໂດຍບໍ່ຈຳເປັນຈະຕ້ອງຜ່ານຄວາມຕາຍ ທຸກຄົນທີ່ເປັນຄົນຊອບທຳຈະໄດ້ຮັບຊີວິດອັນຕະຫລອດໄປເປັນນິດຄົນອະທຳທຸກຄົນບົນໂລກນີ້ຈະເປັນທຸກຮ້ອງໃຫ້ເມື່ອພວກເຂົາເຫັນພະເຍຊູ ແຜ່ນດິນໄຫວອັນໃຫຍ່ຈະເຮັດໃຫ້ໂລກພັງທະລາຍ ຄົນບາບທຸກຄົນຕາຍຢ່າງທຳລະມານ. ອີກເຄິ່ງໜຶ່ງບໍ່ສາມາດບອກໄດ້ ບໍ່ມີປາກກາໃດ

ຂອງມະນຸດສາມາດຊຽນອະທິບາຍໄດ້ ບໍ່ມີມະນຸດຄົນໃດສາມາດເຂົ້າໃຈໄດ້ເຖິງຄວາມງົດງາມຂອງພະບາລະມີຂອງພະຄຣິດເມື່ອພະອົງສະເດັດມາຄັ້ງທີສອງ! ແຕ່ວ່າຂ້າພະເຈົ້າຈະກ່າວໃຫ້ຮູ້ຂ້າວໆກ່າວກັບສິ່ງຕ່າງທີ່ນັກຊຽນນັກກະວີຫລາຍໆຄົນພະຍາຍາມອະທິບາຍກ່ຽວກັບການສະເດັດມາຄັ້ງທີສອງຂອງພະເຍຊູ ວ່າເຫດການນີ້ຈະເປັນແນວໃດຕາມທີ່ໄດ້ອະທິບາຍໄວ້ໃນພະຄຳພີ. ໃນໂມງເວລາທີ່ບໍ່ມີໃຜຄາດຫວັງນັ້ນພະເຍຊູຈະສະເດັດມາ ຟ້າສະຫວັນຈະຖືກມ້ວນເຂົ້າກັນ ແຜ່ນດິນໂລກຈະສັ່ນສະເທືອນ ພູເຂົາແລະເກາະທຸກໜ່ວຍຈະເຄື່ອນຍ້າຍໄປມາ.

ໃນທັນໃດນັ້ນເມກດຳທາງທິດຕາເວັນອອກຈະປາກົດ ເມກນີ້ມີຂະໜາດນ້ອຍເທົ່າກັບເຄິ່ງໜຶ່ງຂອງມືມະນຸດ. ເມື່ອເມກນີ້ເຄື່ອນເຂົ້າມາໃກ້ໂລກ ມັນຈະຄ່ອຍແຈ້ງຂຶ້ນໆແລະມີສະງ່າລາສີ ແລ້ວກໍຈະກາຍເປັນກ້ອນເມກໃຫຍ່ ແລະມີຮຸ້ງຢູ່ເທິງເມກນັ້ນ ຄົນຊອບທຳທັງຫລາຍກໍເຝົ້າມອງໄປທີ່ເມກນັ້ນແບບງຽບໆ ເມື່ອເວລາເວົ້າຈາກັນ ພວກເຂົາກໍເວົ້າຄ່ອຍໆຄືກັບສຽງກະຊິບ ທ້ອງຟ້າກໍເຕັມໄປດ້ວຍແສງເຈີດຈ້າ ທູດສະຫວັນຫລາຍລ້ານອົງຈະອ້ອມຮອບພະທີ່ນັ່ງຂອງພະເຍຊູ ເຮັດໃຫ້ທ້ອງຟ້າສວຍງາມໄປໝົດ. ເມື່ອສິ່ງເຫລົ່ານີ້ຫຍັບເຂົ້າມາໃກ້ແຜ່ນດິນໂລກ “ຕາທຸກດວງ” ກໍເຝົ້າມອງໄປທີ່ພະເຍຊູຜູ້ເປັນກະສັດ! ມຸງກຸດຂອງພະອົງສ່ອງສະງ່າເຈີດຈ້າບໍ່ມີມົງກຸດໃດໃນໂລກທຽບໄດ້ ພະພັກພະອົງເຕັມໄປດ້ວຍສະງ່າລາສີບໍລິສຸດ ພະອົງຊົງມີພະນາມຈາລຶກໄວ້ທີ່ເຄື່ອງທົງ (ຊຸດຄຸມ) ແລະທີ່ພະອຸຣະ (ກົກຂາ) ຂອງພະອົງວ່າ, “ຈອມເຈົ້າກະສັດ” ແລະ “ຈອມເຈົ້ານາຍ”

ແລ້ວກະສັດທັງຫລາຍໃນແຜ່ນດິນໂລກ ພວກເຈົ້ານາຍ ພວກນາຍພັນນາຍພົນ ພວກເສດຖີ ພວກຜູ້ມີອຳ-ນາດ ແລະທຸກຄົນທັງທີ່ເປັນຂ້ອຍຂ້າແລະມີເສຣີກໍພາກັນໄປລີ້ຊ່ອນຢູ່ໃນຖໍ້າແລະໃນຫວ່າງຫີນຕາມພູເຂົາຮ້ອງບອກພູແລະໂງ່ນຫີນວ່າ, “ຂໍໃຫ້ເນີ້ງມາບັງພວກເຮົາໄວ້ ໃຫ້ພົ້ນຈາກພຣະພັກຂອງພຣະອົງ ຜູ້ຊົງປະທັບເທິງພຣະຣາຊບັນລັງແລະຈາກພຣະພິໂຣດຂອງພຣະເມສານ້ອຍນັ້ນ” ຄົນທັງຫລາຍທີ່ຂົ່ມເຫງແລະຂ້າໄພ່ພົນຂອງພະເຈົ້າ ແລະຄົນທີ່ເຍາະເຍີ້ຍແລະປະຕິເສດພະຄຣິດວ່າພະອົງບໍ່ແມ່ນພະບຸດຂອງພະເຈົ້າ ແລະຄົນທີ່ຮ້ອງວ່າ “ຕຶງລາວ” “ຕຶງລາວ” ຈະຖືກນຳມາຢືນຕໍ່ພະພັກພະເຍຊູ ຫົວໃຈຂອງພວກເຂົາແທບຈະສະຫລາຍໄປ ຫົວເຂົ່າພວກເຂົາອ່ອນລົງ, ພວກເຂົາທັງຢ້ານທັງກົວ ທັງຮ້ອງໄຫ້ ທັງໝົດຫວັງ ແລະຮ້ອງອອກມາວ່າ “ພະອົງເປັນພະບຸດຂອງພະເຈົ້າ, ພະອົງເປັນພະເມສານ້ອຍທີ່ແທ້ຈິງ”

ພວກເຂົາເຫັນພະສະງ່າລາສີຂອງພະອົງ ຄົນທີ່ເຍະເຍີ້ຍພະອົງແລະບໍ່ເຊື່ອວ່າພະອົງເປັນພະບຸດຂອງພະເຈົ້າເວົ້າຫຍັງບໍ່ອອກ ຄົນເຫລົ່ານີ້ຄືພວກຄົນທີ່ທະນົງ ເວົ້າເຍາະເຍີ້ຍພະນາມກະສັດຂອງພະເຍຊູ ຄົນທີ່ສັ່ງໃຫ້ທະຫານສວມມົງກຸດໜາມໃຫ້ພະອົງ ພວກເຂົາຄືຄົນທີ່ບໍ່ເຄົາລົບພະອົງ ແລະເອົາເສື້ອຄຸມສີມ່ວງຄຸມໃສ່ພະອົງ ພວກເຂົາເອົາຄະທາໃສ່ມືຂອງພະອົງ ເຮັດເຍາະເຍີ້ຍວ່າພະອົງເປັນກະສັດ ແລະເຮັດທຳທ່າກົ້ມລົງ

ກາບພະອົງ ດ້ວຍທ່າທາງເຍາະເຍີ້ຍ ພວກເຂົາຄືຄົນທີ່ຊົງບຕີພະອົງແລະຖົ່ມນ້ຳລາຍໃສ່ພະອົງ ແຕ່ວ່າເມື່ອຕອນນັ້ນມາເຖິງ ພວກເຂົາຈະບໍ່ກ້າສູ້ພະພັກພະອົງ ພວກເຂົາຈະພະຍາຍາມໜີຈາກພະພັກອັນຊົງອຳນາດສະງ່າລາສີຂອງພະອົງ. ຄົນທີ່ຕອກຕະປູໃສພະກອນ (ມື)ແລະເທົ້າຂອງພະອົງ ແລະທະຫານທີ່ແທງຊວງຂ້າງຂອງພະອົງ ຈະເບິ່ງໄປທີ່ຮອຍເຫລົ່ານີ້ດ້ວຍຄວາມກົວແລະຄວາມສຳນຶກຜິດ ດ້ວຍຄວາມຢ້ານກົວພວກປະໂລຫິດ ພວກນາຍທະຫານ ພວກເຈົ້າພວກນາຍທັງຫລາຍຈະຈຳເຫດການທີ່ຄາວາຣີໄດ້ ແລະພວກເຂົາກໍເຕັມໄປດ້ວຍຄວາມຢ້ານກົວ ຕົນໂຕຮ່າງກາຍຂອງເຂົາກໍຈະສັ່ນ ພວກເຂົາຈະສ່າຍຫົວໄປມາດ້ວຍຄວາມຢ້ານກົວ ພວກເຂົາຈຳໄດ້ວ່າຄັ້ງໜຶ່ງພວກເຂົາເຄີຍເວົ້າລົບລູ່ພະອົງວ່າ

(ມັດທາຍ 27:42-43) “ເຂົາຊ່ວຍຄົນອື່ນໃຫ້ພົ້ນໄດ້ ແຕ່ຊ່ວຍຕົນເອງບໍ່ໄດ້ ເຂົາເປັນກະສັດອິສຣາເອນໃຫ້ເຂົາລົງມາຈາກໄມ້ກາງແຂນດຽວນີ້ເທາະ ແລ້ວພວກເຮົາຈະໄດ້ເຊື່ອຖືເຂົາ”
“ທ່ານໄດ້ວາງໃຈໃນພຣະເຈົ້າ ຖ້າພຣະເຈົ້າຊົງພໍພຣະທັຍໃນທ່ານ ກໍໃຫ້ພຣະເຈົ້າຊົງໂຜດໃຫ້ທ່ານພົ້ນໄດ້ໃນບັດນີ້”

ພວກຄົນທີ່ຢາກຈະທຳຮ້າຍພະຄຣິດແລະໄພ່ພົນຜູ້ສັດທາພະອົງຈະໄດ້ເຫັນສະງ່າລາສີຂອງພະອົງທີ່ອ້ອມຮອບພວກເຂົາ ໃນຂະນະທີ່ພວກເຂົາກຳລັງຢ້ານກົວຢູ່ນັ້ນ ພວກເຂົາຈະໄດ້ຍິນຄົນຊອບທຳຮ້ອງຕະໂກນອອກມາດ້ວຍຄວາມຍິນດີວ່າ

(ເອຊາຢາ 25:9) “ນີ້ຄືພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ເຮົາໄດ້ລໍຄອຍພຣະອົງ ເພື່ອວ່າພຣະອົງຈະຊົງຊ່ວຍເຮົາໃຫ້ລອດ”

ໃນຂະນະທີ່ໂລກເຕັມໄປດ້ວຍຄວາມວຸ້ນວາຍ ຈະມີຟ້າເຫລື້ອມຟ້າແມບ ແລະມີສຽງຂອງບຸດພະເຈົ້າອອກມາຈາກຟ້າສະຫວັນ ເພື່ອເອີ້ນເອົາຄົນຊອບທຳທີ່ຕາຍ(ກຳລັງຫລັບ)ໄປແລ້ວ ພະອົງຈະມອງໄປທີ່ຫລຸມຟັງສົບຂອງພວກເຂົາ ພະອົງຈະຍົກພະຫັດຂຶ້ນ ແລະຮ້ອງອອກມາວ່າ “ຕື່ນ ຕື່ນ ຕື່ນ ຄົນທັງຫລາຍທີ່ເປັນຝຸ່ນຫລັບໄຫລ ຈົ່ງຕື່ນ!” ແລ້ວຄົນທັງຫລາຍທີ່ຕາຍແລະໄດ້ຍິນສຽງເອີ້ນຂອງພະອົງຈະຕື່ນແລະກັບມາມີຊີວິດ. ແລ້ວຜູ້ຄົນເປັນຈຳນວນມະຫາສານໃນທົ່ວໂລກທີ່ຟື້ນມາຈາກຄວາມຕາຍຈະມີສະງ່າລາສີນິລັນປົກຫຸ້ມແລະຈະຮ້ອງອອກມາວ່າ

(1ໂກຣິນໂທ 15:55) “ໂອ ຄວາມຕາຍເຮີຍ, ຊັຍຊະນະຂອງມຶງຢູ່ໃສ ໂອຄວາມຕາຍເຮີຍ, ໄລພິດຂອງມຶງຢູ່ໃສ”

ແລ້ວຄົນຊອບທຳທີ່ເປັນຂຶ້ນມາຈາກຕາຍແລະຄົນຊອບທຳທີ່ຍັງເປັນຢູ່ຈະມາລວມກັນ ແລະຮ້ອງຕະໂກນສຽງແຫ່ງໄຊຊະນະອອກມາ ສ່ວນຄົນອະທຳ ຄົນບໍ່ດີຈະຍັງຖືກຝັງຢູ່ໃນຫລຸມຝັງສົບຢູ່. ນີ້ຊ່າງເປັນການເອີ້ນຄືນຊີວິດທີ່ມະຫັດສະຈັນແທ້ໆ. ອັນນີ້ເປັນສິ່ງທີ່ເວົ້າກັນມາຕັ້ງແຕ່ນານ ຫວັງກັນມາຕັ້ງແຕ່ຫລາຍປີຄອຍແລ້ວຄອຍເລົ່າ ແຕ່ບໍ່ເຄີຍເຂົ້າໃຈຈັກເທື່ອ

(1 ໂກຣິນໂທ 15:52) ຄົນຊອບທຳທີ່ຍັງເປັນ(ມີຊີວິດ)ຢູ່ ຈະໄດ້ຮັບການປ່ຽນໃໝ່ "ໃນຊົ່ວຂະນະດຽວ ໃນພັບຕາດຽວ" ເມື່ອໄດ້ຍິນສຽງເອີ້ນຂອງພະເຈົ້າ ພວກເຂົາຈະມີຮ່າງກາຍທີ່ເປັນອຳມະຕະ ບໍ່ຮູ້ຈັກເປື່ອຍເໜົ່າ ແລະຈະມາລວມໂຕກັນກັບຄົນທີ່ເປັນຄືນມາຈາກຕາຍ ແລະຈະຖືກຮັບຂຶ້ນໄປພົບພະເຈົ້າໃນຟ້າອາກາດ.

ບັນດາທູດສະຫວັນຈະເຕົ້າໂຮມບັນດາຄົນທີ່ຟື້ນຂຶ້ນມາຈາກທຸກສາລະທິດ ບັນດາເດັກເລັກເດັກນ້ອຍຈະຖືກທູດສະຫວັນອູ້ມຂຶ້ນໄປແລະເອົາໄປໃສ່ອ້ອມແຂນຂອງພໍ່ແມ່ເຂົາ. ໝູ່ຄູ່ທີ່ຖືກຄວາມຕາຍພາກຈາກກັນຈະກັບມາພົບກັນແລະຈະບໍ່ມີວັນພາກຈາກກັນອີກຈັກເທື່ອ ແລ້ວພວກເຂົາຈະຮ້ອງເພງແຫ່ງຄວາມຍິນດີເມື່ອພວກເຂົາຖືກຮັບເຂົ້າໄປໃນແຜ່ນດິນຂອງພະເຈົ້າ

ແລະໃນຂະນະທີ່ພວກເຂົາຖືກຮັບເຂົ້າໄປໃນສະຫວັນ ທູດສະຫວັນຈະເປ່ງສຽງອອກມາວ່າ "ບໍລິສຸດ ບໍລິ-ສຸດ ບໍລິສຸດ ພະເຈົ້າຜູ້ຊົງອຳນາດ." ແລະຄົນທີ່ເປັນຂຶ້ນມາຈະຮ້ອງ "ຮາເລລູຢາ" ໃນຂະນະທີ່ເຂົາກຳລັງເຂົ້າໄປເມືອງບໍລິສຸດ ກ່ອນທີ່ຈະເຂົ້າໄປເມືອງບໍລິສຸດ ພະຜູ້ຊ່ອຍໃຫ້ລອດຈະປະທານສັນຍາລັກແຫ່ງໄຊ-ຊະນະແກ່ຜູ້ທີ່ຕິດຕາມພະອົງ ແລະຈະສວມຊຸດປະດັບໃຫ້ເຂົາ ຄົນເປັນຈຳນວນມະຫາສານທີ່ເປັນຂຶ້ນມາຈະມອງໄປທີ່ພະອົງ ຜູ້ມີພະພັກເຈີດຈ້າກວ່າມະນຸດທຸກຄົນ ແລະຮູບຮ່າງຂອງພະອົງສະງ່າລາສີງົດງາມກວ່າບຸດມະນຸດທຸກຄົນ ແລ້ວພະເຍຊູຈະສວມມົງກຸດໃຫ້ແກ່ຜູ້ຊະນະທຸກຄົນ ທີ່ມົງກຸດນັ້ນຈະມີຊື່ໃໝ່ຂອງແຕ່ລະ-ຄົນຂຽນໄວ້ ແລະມີຄຳສະຫລັກວ່າ "ບໍລິສຸດແດ່ພະຜູ້ເປັນເຈົ້າ" ຫົວໃຈທຸກດວງຈະເຕັມໄປດ້ວຍຄວາມສຸກອັນຫາຄຳອະທິບາຍບໍ່ໄດ້ ແລະພວກເຂົາຈະຮ້ອງສັນລະເສີນພະອົງດ້ວຍຄວາມຍິນດີ ເມື່ອພວກເຂົາຖືກຮັບຂຶ້ນໄປແລ້ວ ພວກເຂົາກໍຈະເຫັນເມືອງບໍລິສຸດ ຢູ່ຕໍ່ໜ້າເຂົາ ເມືອງນີ້ ປະຕູເຮັດດ້ວຍມຸກດາ ແລະພະເຍຊູກໍເປີດປະຕູເມືອງນີ້ໄວ້ ຊົນຊາດທັງຫລາຍທີ່ຮັກສາບັນຍັດແລະລໍຄອຍພະອົງຈະເຂົ້າໄປໃນເມືອງນີ້ ໃນທີ່ນັ້ນພວກເຂົາໄດ້ເຫັນແດນສະຫວັນຂອງພະເຈົ້າ ເຊິ່ງເມື່ອກ່ອນເປັນບ້ານຂອງອາດາມແລະເອວາກ່ອນທີ່ພວກເຂົາໄດ້ເຮັດບາບ

ຫລັງຈາກນັ້ນກໍມີສຽງທີ່ໄພເລາະກວ່າສຽງດົນຕີໃດໆກ່າວອອກມາວ່າ "ການສູ້ຮົບຂອງພວກເຈົ້າສິ້ນສຸດແລ້ວ" "...ຈົ່ງມາ, ເຈົ້າຜູ້ໄດ້ຮັບພະພອນຈາກພະບິດາເຮົາ ຈົ່ງມາຮັບອາລາດຊະອານາຈັກເຊິ່ງໄດ້ຈັດຕຽມ

ໄວ້ຈາກຮາກຖານຂອງໂລກ (ແປມາຈາກໜັງສື Great Controversy ຂອງ ເອວເລັນ ຈີ ໄວທ໌, ໜ້າ 640-646)

ນີ້ຄືຄວາມຫວັງຂອງພວກເຮົາທັງຫລາຍ ນີ້ຄືສິ່ງທີ່ເຮົາໄຝ່ຝັນ! ພວກເຮົາສາມາດມີຊີວິດນິລັນ! ຖ້າພວກເຮົາສູນເສຍຊີວິດນິລັນ ພວກເຮົາກໍສູນເສຍທຸກສິ່ງ ຖ້າພວກເຮົາບໍ່ພ້ອມສຳລັບການກັບມາໃນໄວໆຂອງພະຄຣິດ ພວກເຮົາກໍພາດໂອກາດທີ່ຈະເຫັນເຫດການໃຫຍ່ທີ່ສຸດຂອງປະຫວັດສາດ.

ພະເຍຊູເວົ້າຕັດວ່າ "ຈົ່ງມາ-ມາຮັບເອົາການໃຫ້ອະໄພ ມາຮັບເອົາຄວາມເມດຕາ ມາຮັບເອົາຊີວິນິລັນ ຈົ່ງເຂົ້າມາໃນລາດຊະອານາຈັກທີ່ໄດ້ຈັດຕຽມສຳລັບທ່ານ" ຖ້າພີ່ນ້ອງປາດຖະໜາຈະອາໃສເປັນນິດໃນລາດຊະອານາຈັກຂອງພະອົງ, ກໍຂໍໃຫ້ພີ່ນ້ອງຢືນຂຶ້ນໃນຂະນະທີ່ເຮົາອະທິຖານຮ່ວມກັນ.